# ການຂໍຜູ້ແປພາສາຂອງສານ

ນາຍພາສາຂອງສານ ແມ່ນຄົນທີ່ເປັນກາງ ປຽບຄື “ທາງ ຫລື ທໍ່ ຕໍ່ລະຫວ່າງພາສາ” ເພື່ອຊ່ວຍໃຫ້ຄົນທີ່ບໍ່ສາມາດເວົ້າແລະບໍ່ເຂົ້າໃຈພາສາອັງກິດ ຫລືອາດຈະໄດ້ແຕ່ບໍ່ໄດ້ຫລາຍ ໃຫ້ສາມາດເຂົ້າໃຈແລະຕອບໄດ້ຢ່າງລະອຽດເມື່ອຕ້ອງຂຶ້ນສານ. ໜ້າທີ່ຂອງຜູ້ແປພາສາແມ່ນມີຢູ່ສອງຢ່າງດ້ວຍກັນ:

1. ຕ້ອງແນ່ໃຈວ່າຄຳແປທັງໝົດທີ່ແປຕໍ່ໜ້າສານນັ້ນມີຄວາມໝາຍກົງກັນລະຫວ່າງພາສາເຄົ້າແລະພາສາທີ່ແປໃສ່ ລວມທັງຄຳເວົ້າພາສາອັງກິດທີ່ແປໃຫ້ຄົນທີ່ເວົ້າອັງກິດບໍ່ໄດ້ນັ້ນຟັງ ແລະຄຳເວົ້າຂອງຄົນນັ້ນທີ່ໄດ້ແປເປັນພາສາອັງກິດ; ແລະ
2. ແປໃຫ້ຄົນທີ່ບໍ່ເຂົ້າໃຈພາສາອັງກິດນັ້ນ ສາມາດສື່ສານແລະເຂົ້າໃຈໄດ້ເທົ່າທຽມກັນກັບຄົນທີ່ຮູ້ພາສາອັງກິດນັ້ນ

**ການທີ່ທ່ານຂໍມີນາຍພາສາຈະບໍ່ມີຜົນເສັຍໃດໆ ຕໍ່ການພິຈາລະນາຄະດີຂອງທ່ານ.**

- ຖ້າທ່ານຕ້ອງການນາຍພາສາ, ທ່ານຈຳເປັນຕ້ອງໄດ້ຂໍນຳສານ **ລ່ວງໜ້າ** ກ່ອນຈະເຖິງເວລາທີ່ມີການນັດຂຶ້ນສານ. ຖ້າຫາກທ່ານບໍ່ແຈ້ງສານລ່ວງໜ້າກໍອາດເຮັດໃຫ້ຊັກຊ້າໂດຍບໍ່ຈຳເປັນ.
- ຖ້າທ່ານມີທະນາຍຄວາມ, ໃຫ້ບອກເພິ່ນວ່າ ທ່ານຕ້ອງການນາຍພາສາ ແລະຈົ່ງຖາມໃຫ້ແນ່ໃຈວ່າເພິ່ນໄດ້ແຈ້ງເລື່ອງນີ້ໃຫ້ທາງສານຮັບຮູ້. ທະນາຍຄວາມບາງຄົນເຫັນວ່າ ທ່ານເວົ້າພາສາອັງກິດແບບພໍເຂົ້າໃຈກັນໄດ້ເວລາໄດ້ເວົ້າກັບເພິ່ນກ່ອນທີ່ຈະໄປຂຶ້ນສານເພື່ອສູ້ຄະດີ, ແລ້ວເພິ່ນກໍເລີຍເຂົ້າໃຈແບບຜິດໆວ່າ ທ່ານຈະຟັງແລະເຂົ້າໃຈທັງໝົດໄດ້ໃນເວລາຂຶ້ນສານເພື່ອສູ້ຄະດີນັ້ນ.
- ຖ້າທ່ານບໍ່ມີທະນາຍຄວາມ, ເມື່ອທ່ານມີນັດຂຶ້ນສານທ່ານຈົ່ງແຈ້ງໃຫ້ຜູ້ຊ່ວຍຜູ້ພິພາກສາຫລືສມຽນຂອງສານວ່າທ່ານຕ້ອງການຜູ້ແປພາສາໃນເວລາທ່ານມາຂຶ້ນສານນັ້ນ. ຖ້າທ່ານເວົ້າເລື່ອງນີ້ໃຫ້ເພິ່ນບໍ່ໄດ້, ກໍຈົ່ງຊີ້ມືໃສ່ຂໍ້ຄວາມພາສາອັງກິດໃນວັກຢູ່ກ້ອງນີ້:

*I understand that I am entitled to a certified court interpreter for my court proceedings. Please contact Court Interpreter Services to schedule an interpreter for the day of my court appearance.*

**<u>FAQ - ຄຳຖາມທີ່ຄົນມັກຖາມປະຈຳ</u>**

***ຖາມ:*** *ຖ້າຂ້ອຍບໍ່ເຂົ້າໃຈພາສາອັງກິດ ຂ້ອຍຄວນເຮັດຫຍັງ?*

**ຕອບ:** ຈົ່ງຂໍຜູ້ແປພາສາ ໂດຍໃຫ້ທະນາຍຄວາມເປັນຜູ້ຂໍໃຫ້ ຫລືແຈ້ງຕໍ່ສານວ່າທ່ານຕ້ອງການຜູ້ແປພາສາໃນມື້ນັດຂຶ້ນສານຂອງທ່ານນັ້ນ.

***ຖາມ:*** *ຂ້ອຍຂໍລົມກັບນາຍພາສາ ກ່ຽວກັບຄະດີຂອງຂ້ອຍ ຫລືເພື່ອຖາມສິ່ງຕ່າງໆກັບເພິ່ນ<u>ສອງຕໍ່ສອງໂດຍກົງ</u>ໄດ້ບໍ?*

**ຕອບ:** ບໍ່ໄດ້, ນາຍພາສາມີໜ້າທີ່ຕ້ອງແປພຽງແຕ່ຄຳເວົ້າລະຫວ່າງທ່ານແລະທະນາຍຄວາມຫລືສານ ເທົ່ານັ້ນ.

***ຖາມ:*** *ຂ້ອຍບໍ່ມີເງິນຈ້າງນາຍພາສາເພື່ອຂຶ້ນສານ. ຈະໃຫ້ຂ້ອຍເຮັດແນວໃດ?*

**ຕອບ:** ບໍ່ເປັນຫຍັງ, ທ່ານຍັງສາມາດຂໍຜູ້ແປພາສາໃນສານໃຫ້ທ່ານໄດ້. ທາງສານຈະຊອກຫານາຍພາສາໃຫ້ທ່ານໂດຍບໍ່ຄິດຄ່າເລີຍ.

***ຖາມ:*** *ຂ້ອຍມີພີ່ນ້ອງຫລືເພື່ອນທີ່ເວົ້າພາສາອັງກິດໄດ້. ລາວແປໃຫ້ຂ້ອຍຢູ່ໃນສານໄດ້ບໍ?*

**ຕອບ:** ພີ່ນ້ອງແລະເພື່ອນທີ່ມາສານກັບທ່ານຈະຊ່ວຍວຽກເລັກໆນ້ອຍໆ ທາງນອກຫ້ອງສານກໍໄດ້, ເຊັ່ນ ການຕິດຕໍ່ຫ້ອງການສມຽນຂອງສານ, ແຕ່ສານຈະບໍ່ອະນຸຍາດໃຫ້ລາວແປໄດ້ໃນລະຫວ່າງການດຳເນີນການຕໍ່ໜ້າສານ. ພາສາທີ່ແປຕໍ່ໜ້າສານຈຳເປັນຕ້ອງແມ່ນຜູ້ທີ່ສາມາດເວົ້າພາສາອັງກິດແລະພາສາຕ່າງປະເທດ(ພາສາລາວ)ໃນລະດັບສູງໆ, ນອກຈາກນັ້ນອີກ ເພິ່ນຕ້ອງຜ່ານການເຝິກອົບຮົມສະເພາະວິຊາ.

***ຖາມ:*** *ຂ້ອຍຈະໄວ້ໃຈນາຍພາສາວ່າ ເພິ່ນຈະບໍ່ເປີດເຜີຍເລື່ອງທີ່ເພິ່ນໄດ້ມາຮູ້ຈັກນີ້ໄດ້ບໍ?*

**ຕອບ:** ໄວ້ໃຈໄດ້.  ນາຍພາສາມີຂໍ້ຜູກມັດທາງສິນທຳໃນການຮັກສາຄວາມລັບຢ່າງສິ້ນເຊີງ.

***ສອບຖາມລາຍລະອຽດຕື່ມໄດ້ທີ່:***

http://courts.arkansas.gov/

**ພະແນກບໍຣິການນາຍພາສາຂອງສານ**

**ອົງການປົກຄອງສານ**

*625 Marshall St.*
*Little Rock, AR 72201*
*ໂທລະສັບ: 501-682-9400*

**ພາສາລາວ *Laotian***

# ຍິນດີຕ້ອນຮັບສູ່ລະບົບ ສານແຫ່ງຣັຖອາແຄນຊໍ

**ອົງການປົກຄອງສານ**

**ພະແນກບໍຣິການນາຍພາສາຂອງສານ**

# ລະບົບສານແຫ່ງຣັຖອາແຄນຊໍ

ບັນດາຫ້ອງການສານແຫ່ງຣັຖອາແຄນຊໍ ແມ່ນສາຂາເອກະເທດຂອງຣັຖ ທີ່ຕ້ອງຮັບຜິດຊອບຕໍ່ການແກ້ໄຂຄະດີໂດຍຄວາມເໝາະສົມແລະເປັນທຳ, ຊຶ່ງເປັນການປົກປ້ອງສິດເສຣີພາບຕ່າງໆ ທີ່ຣັຖທຳມະນູນແລະກົດໝາຍທັງຫລາຍຂອງສະຫະຣັຖອະເມຣິກາແລະຂອງຣັຖອາແຄນຊໍໄດ້ຮັບປະກັນໃຫ້ແກ່ປະຊາຊົນ.

ສານໃນຣັຖອາແຄນຊໍມີຫລາຍລະດັບຂັ້ນ. ສານຂັ້ນສູງທີ່ສຸດແມ່ນ “ສານສູງສຸດແຫ່ງຣັຖອາແຄນຊໍ”. ຕາມທຳມະດາ ສານສູງສຸດ ແລະ ບັນດາ “ສານອຸທອນ” ຈະບໍ່ຮັບພິຈາລະນາຄະດີໃດໆ ຈົນກວ່າສານຂັ້ນລຸ່ມໄດ້ຕັດສິນຄະດີນັ້ນມາກ່ອນ. ຮອງລົງມາແມ່ນມີບັນດາ “ສານສູງປະຈຳເຂດ” ຊຶ່ງຮັບພິຈາລະນາຄະດີ 5 ປະເພດ, ຄື: ຄະດີອາຍາ, ຄະດີແພ່ງ, ການພິສູດພິໄນກຳ, ຄະດີກ່ຽວກັບຄອບຄົວ, ແລະຄະດີເຍົາວະຊົນ. ສານຂັ້ນຕ່ຳສຸດແມ່ນ “ສານປະຈຳເຂດ” ຊຶ່ງມີສອງປະເພດ: ສານຣັຖ ແລະ ສານທ້ອງຖິ່ນ, ແຕ່ທັງສອງປະເພດກໍຮັບພິຈາລະນາຄະດີອາຍາແລະຄະດີແພ່ງຂັ້ນຕ່ຳ, ພ້ອມທັງຄະດີຮ້ອງຟ້ອງມູນຄ່າຕ່ຳ. ເບິ່ງຕົວຢ່າງປະເພດຄະດີຕ່າງໆ ຂ້າງລຸ່ມນີ້.




- ຄະດີອາຍາ: ການລັກ, ການທຳຮ້າຍຮ່າງກາຍ
- ຄະດີແພ່ງ: ຂໍ້ຜູກພັນໃນສັນຍາ, ການເສັຍຫາຍຕໍ່ບຸກຄົນ
- ຄະດີພິສູດພິໄນກຳ: ພິໄນກຳ, ຄວາມອະນຸບານ
- ຄະດີກ່ຽວກັບຄອບຄົວ: ການຢ່າຮ້າງ, ຄ່າລ້ຽງລູກ
- ຄະດີເຍົາວະຊົນ: ເດັກເຮັດຜິດກົດໝາຍອາຍາ, ການປ່ອຍປະລະເລີຍລູກ
- ຄະດີຟ້ອງມູນຄ່າຕ່ຳ: ຟ້ອງຄ່າເສັຍຫາຍໜ້ອຍກວ່າ $5,000

*_**ທ່ານຈົ່ງຈຳໄວ້ວ່າ ສານຂອງຣັຖ ກັບ ສານສະຫະຣັຖ (ຂອງຣັຖບານກາງ) ບໍ່ແມ່ນອັນດຽວກັນ, ເຖິງແມ່ນວ່າມີສານສະຫະຣັຖທີ່ຕັ້ງຢູ່ໃນຣັຖອາແຄນຊໍກໍຕາມ.**_

# ຄຳສັບສຳຄັນ

***ຖ້າທ່ານເວົ້າພາສາອັງກິດບໍ່ໄດ້ຄ່ອງແຄ້ວ, ຈົ່ງຂໍສານລ່ວງໜ້າໃຫ້ຊອກນາຍພາສາທີ່ມີຄຸນວຸທິມາແປໃຫ້ທ່ານໃນມື້ນັດຂຶ້ນສານນັ້ນ. ປະມວນຄຳສັບສຳຄັນນີ້ ໄດ້ແຕ່ງໄວ້ເພື່ອຊ່ວຍໃຫ້ທ່ານເຂົ້າໃຈຄຳສັບຫລັກທາງສານເປັນບາງຄຳ, ແຕ່ບໍ່ແມ່ນໃຫ້ຖືເປັນສິ່ງອ້າງອີງທາງການ ຫລືໃຊ້ແທນຄຳປຶກສາຂອງທະນາຍຄວາມ.***

ການສູ້ຄະດີຕໍ່ໜ້າຜູ້ພິພາກສາ *(Bench Trial)* - ການສູ້ຄະດີ ທີ່ມີຜູ້ພິພາກສາເປັນຜູ້ລົງຄຳຕັດສິນຜູ້ດຽວ, ໂດຍບໍ່ມີຄະນະລູກຂຸນ.

ຄ່າປະກັນຕົວ *(Bail)* - ເງິນທີ່ຜູ້ຖືກກ່າວຫາ ຝາກໄວ້ກັບສານເພື່ອຈະໄດ້ຖືກປ່ອຍອອກຈາກຄຸກຈົນຮອດເວລາທີ່ຈະຂຶ້ນສານສູ້ຄະດີ.

ສມຽນຂອງສານ *(Court Clerk)* - ເຈົ້າໜ້າທີ່ຜູ້ເກັບກຳເອກະສານຕ່າງໆ ໃນສານ. ເອກະສານຕ່າງໆ ເກືອບທັງໝົດຕ້ອງຜ່ານຫ້ອງການຂອງເພິ່ນ.

ການສອບສວນພະຍານ (*Deposition*) - ການສອບຖາມເອົາຄຳໃຫ້ການພາຍໃຕ້ຄຳສັດສາບານ ເພື່ອກະກຽມຂຶ້ນສານສູ້ຄະດີ.

ຈຳເລີຍ/ຜູ້ຖືກກ່າວຫາ *(Defendant)* - ຄົນທີ່ຖືກຄະດີຕໍ່ໜ້າສານ.

ຄະລຸໂທດ/ຄວາມຜິດສະຖານໜັກ *(Felony)* - ຄວາມຜິດອາຍາຂັ້ນຮຸນແຮງ ທີ່ອາດມີໂທດຈຳຄຸກ ແລະ/ຫລື ຖືກປັບໄໝ.

ຄະນະລູກຂຸນ *(Jury)* - ກຸ່ມຊາວເມືອງທີ່ບໍ່ລຳອຽງທີ່ໄດ້ຖືກຄັດເລືອກໃຫ້ຮັບພິຈາລະນາຫລັກຖານພຍານແລ້ວລົງຄຳຕັດສິນຮວມກັນ. ທ່ານອາດມີສິດໃນການຂຶ້ນສານສູ້ຄະດີຕໍ່ໜ້າຄະນະລູກຂຸນໄດ້, ຂຶ້ນກັບປະເພດຄະດີຂອງທ່ານ.

ລະຫຸໂທດ/ຄວາມຜິດສະຖານເບົາ *(Misdemeanor)* - ຄວາມຜິດອາຍາຂັ້ນເບົາກວ່າຄະລຸໂທດ; ຕາມທຳມະດາແມ່ນມີໂທດປັບໄໝ ຫລືຈຳຄຸກໄລຍະສັ້ນ.

ໂຈດ *(Plaintiff)* - ຄົນທີ່ຟ້ອງຄະດີຕໍ່ຈຳເລີຍໃນສານ.

ຂໍ້ຕົກລົງເພື່ອຍອມຜິດ *(Plea Bargain)* - ຂໍ້ຕົກລົງລະຫວ່າງໄອຍະການແລະຈຳເລີຍເພື່ອໃຫ້ຄະດີຈົບລົງດ້ວຍຈຳເລີຍຍອມຮັບຜິດ, ໂດຍທົ່ວໄປທາງຈຳເລີຍຈະໄດ້ຮັບຜ່ອນເບົາໂທດຈຳຄຸກ, ຄຸມປະພຶດ, ແລະ/ຫລືຄ່າປັບໄໝ ໃຫ້ໜ້ອຍລົງ.

*ການຄຸມປະພຶດ (Probation)* - ການອະນຸຍາດໃຫ້ຄົນໂທດບໍ່ຕ້ອງຈຳຄຸກ ໂດຍມີເງື່ອນໄຂໃຫ້ລາວມີຄວາມປະພຶດດີ ແລະໂດຍທົ່ວໄປຈະມີ ເຈົ້າໜ້າທີ່ຄຸມປະພຶດ ຄອຍເບິ່ງແຍງ ແລະຍັງມີຂໍ້ຈຳກັດອື່ນໆ ໃຫ້ລາວປະຕິບັດ ສຸດແລ້ວແຕ່ສານສັ່ງໄວ້.

ໄອຍະການ *(Prosecutor)* - ທະນາຍຄວາມຜູ້ທີ່ຕ່າງໜ້າຣັຖບານໃນການຟ້ອງຄະດີອາຍາ.

ໝາຍຮຽກ *(Summons)* - ໃບແຈ້ງໃຫ້ຈຳເລີຍຮູ້ວ່າ ໄດ້ມີການຍື່ນຄະດີຟ້ອງລາວ ແລະສັ່ງໃຫ້ຕອບສນອງຕາມສຖານທີ່ແລະເວລາທີ່ກຳນົດໃນໃບແຈ້ງ.

ໝາຍເກາະ *(Subpoena)* - ຄຳສັ່ງສານ ທີ່ສັ່ງໃຫ້ໄປໃຫ້ການເປັນພຍານຕໍ່ໜ້າສານ.

## ການກຽມຕົວຂຶ້ນສານ

- **ຈົ່ງ**ແນ່ໃຈລ່ວງໜ້າວ່າທ່ານໄດ້ຂໍນາຍພາສາມາແປຊ່ວຍ ຖ້າທ່ານຫລືທະນາຍຄວາມຂອງທ່ານຄິດສົງໄສວ່າທ່ານອາດຈະບໍ່ເຂົ້າໃຈຄົນເວົ້າພາສາອັງກິດໃນລະດັບສູງໆ
- **ຈົ່ງ**ໄປຮອດກ່ອນໂມງໂດຍເພື່ອເວລາໄວ້ຫລາຍ
- **ຈົ່ງ**ແຕ່ງຕົວຢ່າງສຸພາບຮຽບຮ້ອຍ
- **ຈົ່ງ**ປິດໂທລະສັບມືຖືແລະເຄື່ອງອີເລັກທະໂຣນິກທຸກຢ່າງຂອງທ່ານໄວ້ກ່ອນເຂົ້າໄປຫ້ອງສານ
- **ຈົ່ງ**ແນ່ໃຈລ່ວງໜ້າວ່າທ່ານຫລືທະນາຍຄວາມຂອງທ່ານຖືເອກະສານໄປສານທຸກໆ ສະບັບທີ່ໄດ້ຍື່ນຕໍ່ສານແລ້ວຫລືທີ່ໄດ້ສົ່ງໃຫ້ແກ່ຄູ່ຄະດີເປັນທາງການ, ພ້ອມທັງເອກະສານໃດໆ ອີກທີ່ຈຳເປັນ
- **ຈົ່ງ**ເຄົາລົບນັບຖືຕໍ່ຜູ້ພິພາກສາ ໂດຍການຮ້ອງເພິ່ນວ່າ “ສານທີ່ເຄົາລົບ”
- **ຈົ່ງ**ເວົ້າສຽງດັງແລະຊັດເຈນເພື່ອຜູ້ພິພາກສາ ແລະ/ຫລື ນາຍພາສາຈະສາມາດໄດ້ຍິນແລະເຂົ້າໃຈໄດ້
- **ຢ່າ**ທຳທ່າວ່າທ່ານເຂົ້າໃຈຖ້າທ່ານບໍ່ເຂົ້າໃຈແທ້. ຖ້ານາຍພາສາໄດ້ແປຕາມຄືຄຳຂອງຜູ້ເວົ້າທຸກຢ່າງ, ແຕ່ຜູ້ເວົ້ານັ້ນເວົ້າບໍ່ຖືກຕ້ອງຫລືບໍ່ຊັດແຈ້ງ, ທ່ານຄວນຂໍໃຫ້ຜູ້ເວົ້ານັ້ນໄດ້ເວົ້າຄືນໃໝ່.